ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR










## Gender training and celebration of Lao Women's Union Day
## Media report
(30 July - 24 Aug 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ

Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

# Gender training and celebration of Lao Women's Union Day

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-08-01 | Newspaper | Army newspaper | Page 6 |
| 2023-08-01 | Newspaper | Pathet Lao | Front and page 2 |
| 2023-08-03 | Newspaper | Pasaxon | Page 3 |
| 2023-08-04 | Newspaper | Economic and Commerce | Front and page 5 |
| 2023-07-30 | Social Media | Vientiane Mai | 51K followers |
| 2023-07-31 | Social Media | Pathedlao Facebook | 374K Followers |
| 2023-07-31 | Social Media | Pasaxon Facebook | 22K Followers |
| 2023-08-02 | Social Media | Australia in Laos Facebook | 45K Followers |
| 2023-08-24 | Social Media | Tetra Tech International Development LinkedIn | 57K Followers |
| 2023-08-24 | Social Media | Tetra Tech International Development Facebook | 34K Subscribers |
| 2023-07-28 | Website | KPL English Website | Read article here |
| 2023-08-02 | Website | BEQUAL | Read article here |
| 2023-07-31 | Radio | Vientiane Radio<br>FM 105.5 | |
| 2023-07-31 | Radio | Army Radio<br>FM 99.7 | |
| 2023-07-31 | Radio | Lao National Radio<br>FM 103.7 | |
| 2023-07-31 | Radio | Public Security Radio<br>FM 101.5 | |
| 2023-07-31 | Radio | Lao Youth Radio<br>FM 90.0 | |
| 2023-08-06 | Radio | Education News<br>FM103.7 | |
| 2023-08-02 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 660 members |
| 2023-08-02 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-08-02 | WhatsApp | ETSP | 3 groups with ethnic teachers<br>98 members |
| 2023-08-02 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-08-02 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2023-08-02 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

| 2023-07-30 | Vientiane Mai Facebook |
|---|---|




| 2023-07-31 | Pathedlao Facebook |
|---|---|



| 2023-07-31 | Pasaxon Facebook |
|---|---|

ປະຊາຊົນ
July 31 at 6:27 PM

ກະຊວງສຶກສາທິການ ແລະ ກິລາ ສ້າງທີມຄູຝຶກດ້ານບົດບາດ ຍິງ-ຊາຍ

.........

ທ່ານ ນາງ ສັນທະລີ ສິຣິພົງພັນ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ແລະ ທ່ານນາງ ວາເລັນຕິນາ ເຊກາຕີ ຮັກສາການຮອງຫົວໜ້າຄະນະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ ໄດ້ເປັນປະທານຮ່ວມໃນພິທີສະເຫຼີມສະຫຼອງ ວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ (20/7/1955 -20/7/2023) ເມື່ອບໍ່ດົນມານີ້ ແລະ ເປັນມື້ປິດຊຸດຝຶກອົບຮົມໄລຍະ 5 ວັນ ເພື່ອສ້າງຂີດຄວາມສາມາດສຳລັບທີມງານຄູຝຶກ ທີ່ສ້າງຂຶ້ນໃໝ່ ກໍຄືທີມຄູຝຶກດ້ານບົດບາດຍິງ-ຊາຍ ແລະ ການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ເດັກໃນໂຮງຮຽນ ໃຫ້ບັນດາກົມຂອງກະຊວງສຶກສາທິການ ແລະ ກິລາ.

ທ່ານ ນາງ ສັນທະລີ ສິຣິພົງພັນ ໄດ້ກ່າວວ່າ: ຄູຝຶກດ້ານບົດບາດຍິງ-ຊາຍ ຂອງບັນດາກົມຂອງກະຊວງສຶກສາທິການ ແລະ ກິລາ ຈະມີບົດບາດສຳຄັນໃນການຍົກສູງຄວາມຮັບຮູ້ ກ່ຽວກັບຄວາມສະເໝີພາບຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ. ພາລະບົດບາດຂອງທີມງານຄູຝຶກທີ່ສ້າງຂຶ້ນໃໝ່ນີ້ ແມ່ນຈະໄດ້ຜັນຂະຫຍາຍຜົນການຈັດການຝຶກອົບຮົມ, ສຳມະນາ ແລະ ກອງປະຊຸມກ່ຽວກັບການສົ່ງເສີມ ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ພາຍໃນກົມກອງຂອງຕົນເອງ ແລະ ສະຖາບັນອື່ນໆ ນອກຈາກກະຊວງສຶກສາທິການ ແລະ ກິລາ.

ທ່ານນາງ ວາເລັນຕິນາ ເຊກາຕີ ໄດ້ຊີ້ໃຫ້ເຫັນຄວາມສຳຄັນ ແລະ ການກຳນົດວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ ເປັນສິ່ງບູລິມະສິດ ແລະ ພ້ອມໃຫ້ຄຳໝັ້ນສັນຍາທີ່ຈະແກ້ໄຂບັນຫາຄວາມບໍ່ສະເໝີພາບ ແລະ ຄວາມບໍ່ເປັນທຳ ໂດຍຜ່ານທຸກວຽກງານທີ່ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ. ພ້ອມທັງມີຄວາມພູມໃຈເປັນຢ່າງຍິ່ງ ທີ່ໄດ້ເປັນຄູ່ຮ່ວມພັດທະນາກັບກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານແຜນງານບີຄວາ ເພື່ອສ້າງທີມງານຄູຝຶກ ແລະ ສ້າງຂີດຄວາມສາມາດໃຫ້ແກ່ທີມດັ່ງກ່າວ ຊຶ່ງຈະເປັນທີມຄູຝຶກຫຼັກດ້ານວຽກງານບົດບາດຍິງ-ຊາຍ ຂອງບັນດາກົມຂອງກະຊວງສຶກສາທິການ ແລະ ກິລາ. ຫວັງຢ່າງຍິ່ງວ່າ ທີມຄູຝຶກທີ່ສ້າງຂຶ້ນໃໝ່ນີ້ ຈະນຳໃຊ້ຄວາມຮູ້ຄວາມສາມາດ ທີ່ໄດ້ຝຶກອົບຮົມໃນຄັ້ງນີ້ ໝູນໃຊ້ເຂົ້າໃນການປະຕິບັດຕົວຈິງ ແລະ ຖ່າຍທອດຄວາມຮູ້ ທີ່ໄດ້ຮຽນມາຈາກຂັ້ນສູນກາງ ລົງໄປສູ່ຂັ້ນທ້ອງຖິ່ນຢ່າງມີປະສິດທິຜົນ. ຜູ້ເຂົ້າຮ່ວມຝຶກອົບຮົມຈຳນວນ 34 ທ່ານ ຈາກ 16 ພາກສ່ວນທີ່ໄດ້ຖືກຄັດເລືອກເປັນຜູ້ຕາງໜ້າຈາກຫ້ອງການ, ກົມ, ສະຖາບັນ ແລະ ສູນ ຊຶ່ງຈະເປັນຜູ້ປະສານງານທີ່ສຳຄັນ ແລະ ຈະຮັບຜິດຊອບຕໍ່ວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນຕໍ່ໜ້າ. ບັນດາຄູຝຶກດັ່ງກ່າວນີ້ ຈະໄດ້ຝຶກອົບຮົມຕໍ່ໃຫ້ແກ່ວິຊາການທ່ານອື່ນໆ ທີ່ຢູ່ພາຍໃນກົມກອງຂອງຕົນ ກ້າວໄປເຖິງສາມາດຝຶກອົບຮົມ ໃຫ້ແກ່ພະແນກການອື່ນໃນຂັ້ນທ້ອງຖິ່ນ. ການຝຶກອົບຮົມຄັ້ງນີ້ ໄດ້ຖືກອອກແບບໂດຍສົ່ງເສີມການມີສ່ວນຮ່ວມ ລວມມີທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ຊຶ່ງປະກອບດ້ວຍຫຼາຍເນື້ອໃນ ແລະ ກິດຈະກຳ ທີ່ສອດຄ່ອງກັນ ໂດຍຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບແນວຄວາມຄິດ ທີ່ວ່າການຮຽນຮູ້ແມ່ນບໍ່ມີວັນສິ້ນສຸດ ຫຼື ການຮຽນຮູ້ຕະຫຼອດຊີວິດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການວິເຄາະບົດບາດຍິງ-ຊາຍ, ບັນດາກົດໝາຍທີ່ກ່ຽວຂ້ອງ ແລະ ເຕັກນິກການສອນ.

ການສະເຫຼີມສະຫຼອງວັນສ້າງຕັ້ງ ອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ, ບັນດາຄູຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ ພ້ອມດ້ວຍພະແນກການອ້ອມຂ້າງຈາກແຂວງວຽງຈັນ ຈຳນວນ 66 ທ່ານ ໄດ້ຮ່ວມກັບຄູຝຶກວຽກງານບົດບາດຍິງຊາຍ ຂອງບັນດາກົມຂອງກະຊວງສຶກສາທິການ ແລະ ກິລາ ກຳນົດຄວາມສຳຄັນ ເພື່ອຍົກໃຫ້ເຫັນບັນຫາຂອງການໃຊ້ຄວາມຮຸນແຮງຕໍ່ເດັກ ແລະ ການສົ່ງເສີມບົດບາດຍິງ-ຊາຍ ຢູ່ໃນໂຮງຮຽນ. ຕາມຜົນການສຶກສາທີ່ຜ່ານມາ ສະແດງໃຫ້ເຫັນວ່າ ເກືອບ 1 ໃນ 3 ແມ່ຍິງລາວ (30.3%) ເຄີຍໄດ້ປະສົບກັບຄວາມຮຸນແຮງບາງຮູບແບບ (ທາງກາຍ, ທາງເພດ ຫຼື ຈິດໃຈ) ໃນຊີວິດຂອງເຂົາເຈົ້າ. ອັດຕາການໃຊ້ຄວາມຮຸນແຮງທີ່ຄ້າຍຄືກັນກັບເດັກ ໄດ້ຖືກລາຍງານໃນການສຳຫຼວດຄວາມຮຸນແຮງ ໃນໄວເດັກແຫ່ງຊາດໄດ້ພົບວ່າ ຫຼາຍກວ່າໜຶ່ງສ່ວນສາມຂອງເດັກຍິງແລະ ເດັກຊາຍ ໄດ້ຮັບການໃຊ້ຄວາມຮຸນແຮງໃນໄວເດັກ ຊຶ່ງພະແນກສົ່ງເສີມຄວາມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໄດ້ເນັ້ນໜັກເຖິງບົດບາດຂອງຄູ-ອາຈານ ໃນການປ້ອງກັນຄວາມຮຸນແຮງຕໍ່ເດັກ ແລະ ການສົ່ງເສີມບົດບາດຍິງ-ຊາຍ ຢູ່ໃນໂຮງຮຽນ .

ພາຍຫຼັງການຝຶກອົບຮົມຄັ້ງນີ້, ພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID ມີແຜນຈະພັດ ທະນາ ປຶ້ມຄູ່ມື ການຝຶກອົບຮົມວຽກງານບົດບາດຍິງ-ຊາຍ ຂອງຂະແໜງສຶກສາທິການ ແລະ ກິລາໃນຕໍ່ໜ້າ.



| 2023-08-02 | Australia in Laos Facebook |
|---|---|

Australia in Laos
35m

ອົດສະຕຣາລີຮ່ວມສະເຫຼີມສະຫຼອງວັນສ້າງຕັ້ງສະພັນແມ່ຍິງລາວ.

ທ່ານຮູ້ບໍ່ວ່າ? ເດັກຍິງ ແລະ ເດັກຊາຍໃນລາວ 1 ໃນ 3 ຄົນ ອາດຈະເຄີຍປະສົບຄວາມຮຸນແຮງໃນຮູບແບບໃດໜຶ່ງ ໃນຊີວິດໄວເດັກຂອງພວກເຂົາ (ອີງຕາມບົດລາຍງານການສຳຫຼວດແຫ່ງຊາດກ່ຽວກັບຄວາມຮຸນແຮງໃນໄວເດັກ)

ພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກປະຈຳກະຊວງສຶກສາທິການ ແລະ ກິລາ ໄດ້ເນັ້ນໜັກບົດບາດຂອງຄູ ໃນການປ້ອງກັນການເກີດຄວາມຮຸນແຮງຢູ່ໃນຂັ້ນໂຮງຮຽນ. ໃນປີນີ້, ອົດສະຕຣາລີ ຮ່ວມສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ໂດຍການຮ່ວມມືກັບພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນການຝຶກອົບຮົມຄູຝຶກຫຼັກດ້ານບົດບາດຍິງ-ຊາຍ ໃຫ້ແກ່ບັນດາຄູຝຶກຂອງແຕ່ລະກົມພາຍໃນກະຊວງສຶກສາທິການ ແລະ ກິລາ. ລັດຖະບານອົດສະຕຣາລີ ເຫັນຄຸນຄ່າ ແລະ ໃຫ້ບຸລິມະສິດວຽກງານສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມສຳລັບເດັກທຸກຄົນ.

ທ່ານ ສາມາດອ່ານເພີ່ມຕື່ມກ່ຽວກັບການສະໜັບສະໜູນຂອງ ອົດສະຕຣາລີ ໃຫ້ແກ່ ກະຊວງສຶກສາທິການ ແລະ ກິລາ ໄດ້ທີ່ http://www.bequal-laos.org/

Did you know that more than a third of Lao girls and boys are subjected to some form of violence during their childhood (according to the National Childhood Violence Survey)? The Division for the Advancement of Women, Mothers and Children (DAWMC) in the Ministry of Education and Sports (MoES) stressed the role of teachers in preventing School Related Gender-Based Violence. This year, Australia marked the establishment of Lao Women's Union Day by working with DAWMC to train Master Gender Trainers across MoES departments. The Australia Government values and prioritises gender equality and inclusive education.

Read more about Australia's support to the Ministry of Education and Sports at http://www.bequal-laos.org/

ສູນກາງ ສະຫະພັນແມ່ຍິງລາວ Lao Women's Union

#BuildingLaoLearners, #BuidlingLaosFutureTogether, #uniceflaos, #LaoWomenUnion



| 2023-08-24 | Tetra Tech International Development LinkedIn and Facebook |
|---|---|

Tetra Tech International Development
57,314 followers
4d

The Ministry of Education and Sports (LAO PDR) introduce a 'Master Gender Trainers' team for MoES Departments.

The new team, consisting of 34 delegates from 16 departments, attended a comprehensive 5-day workshop on gender mainstreaming, followed by the celebration of the 68th Anniversary of the Lao Women Union Day.

Australia is proud to partner with the Ministry of Education and Sports through the #BEQUAL program on the creation and capacity building of this core group of Master Gender Trainers in the Education Sector. With the support of the Australian Government and USAID, a detailed training manual is in the pipeline.

Read more: https://lnkd.in/gXyEM2qu.

#TetraTech #InternationalDevelopment #Education




Ministry of Education and Sports, with support from Australia and the United States of America establishes a 'Master Gender Trainers' team for MoES Departments.
https://www.bequal-laos.org

Tetra Tech International Development Services
4d ·

The Ministry of Education and Sports (LAO PDR) introduce a 'Master Gender Trainers' team for MoES Departments.

The new team, consisting of 34 delegates from 16 departments, attended a comprehensive 5-day workshop on gender mainstreaming, followed by the celebration of the 68th Anniversary of the Lao Women Union Day.

Australia is proud to partner with the Ministry of Education and Sports through the #BEQUAL program on the creation and capacity building of this core group of Master Gender Trainers in the Education Sector. With the support of the Australian Government and USAID, a detailed training manual is in the pipeline.

Read more: https://www.bequal-laos.org/ministry-of-education-and.../

#TetraTech #InternationalDevelopment #Education



